ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສ້າງຄວາມຮັບຮູ້ ແລະ ເຂົ້າໃຈໃຫ້ແກ່ຄະນະນຳຂອງ ທຫລ ກ່ຽວກັບວຽກງານການຈັດຕັ້ງປະຕິບັດບາເຊວ 2





ທະນາຄານແຫ່ງ ສປປ ລາວ ( ທຫລ ) ໄດ້ຈັດສຳມະນາທາງດ້ານວິຊາການກ່ຽວກັບການຈັດຕັ້ງຕິບັດພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ໃຫ້ແກ່ຄະນະນຳຂອງ ທຫລ ໂດຍການໃຫ້ກຽດເປັນປະທານຂອງທ່ານ ປອ ສົມພາວ ໄຟສິດ ຜູ້ວ່າການ ທຫລ. ພ້ອມນີ້, ກໍ່ມີບັນດາຄະນະກົມ-ທຽບເທົ່າກົມພາຍໃນ ທຫລ ແລະ ບັນດາຫົວໜ້າສາຂາ ທຫລ ປະຈຳແຕ່ລະພາກເຂົ້າຮ່ວມ.





ການສຳມະນາໄດ້ດຳເນີນໄປເປັນເວລາເຄິ່ງວັນ ໃນວັນທີ 17 ມີນາ 2017 ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV ທຫລ ນະຄອນຫຼວງວຽງຈັນ ເຊິ່ງຄະນະຮັບຜິດຊອບພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ໄດ້ສະເໜີກ່ຽວກັບແຜນຍຸດທະສາດຂອງ ທຫລ ແຕ່ປີ 2016-2020 ແລະ ວິໄສທັດຮອດປີ 2030 ທີ່ຕິດພັນກັບການຄຸ້ມຄອງ

ທະນາຄານທຸລະກິດ; ເນື້ອໃນສຳຄັນຂອງຫຼັກການບາເຊວ 2; ການກະກຽມຈັດຕັ້ງປະຕິບັດຫຼັກການສຳຄັນບາເຊວເພື່ອການຄຸ້ມຄອງການທະນາຄານຢ່າງມີປະສິດທິຜົນ ( BCPs ) ແລະ ບາເຊວ 2 ໃນໄລຍະຜ່ານມາ ແລະ ທິດທາງກຳນົດແຜນແມ່ບົດໃນການພັດທະນາການຄຸ້ມຄອງທະນາຄານທຸລະກິດ; ທິດທາງການກຳນົດແຜນຈັດຕັ້ງປະຕິບັດ ແລະ ສາຍພົວພັນກັບກົມກ່ຽວຂ້ອງ. ພ້ອມນັ້ນ, ຜູ້ເຂົ້າຮ່ວມ ຍັງໄດ້ມີການປຶກສາຫາລື, ແລກປ່ຽນບົດຮຽນ ແລະ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ໃນຕອນທ້າຍ, ທ່ານ ປອ ສິມພາວ ໄຟສິດ ຜູ້ວ່າການ ທຫລ ໄດ້ກ່າວສະແດງຄວາມຍ້ອງຍໍ-ຊົມເຊີຍຕໍ່ຄະນະຮັບຜິດຊອບພັດທະນາການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ທີ່ໄດ້ເອົາໃຈໃສ່ໃນການຄົ້ນຄວ້າວຽກງານດັ່ງກ່າວ ພ້ອມທັງໄດ້ເນັ້ນໜັກບາງບັນຫາເພື່ອເປັນແນວທາງໃຫ້ແກ່ຄະນະຮັບຜິດຊອບວຽກງານດັ່ງກ່າວໄດ້ນຳໄປຈັດຕັ້ງປະຕິບັດໃນການຄົ້ນຄວ້າ ແລະ ປັບປຸງໃນຕໍ່ໜ້າໃຫ້ແທດເໝາະກັບສະພາບການເຄື່ອນໄຫວຕົວຈິງຂອງລະບົບທະນາຄານ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ້າງຂະແໜງການທະນາຄານຂອງ ສປປ ລາວ ໃຫ້ມີຄວາມເຕີບໃຫຍ່-ເຂັ້ມແຂງ-ໝັ້ນຄົງ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນເທື່ອລະກ້າວ.




*❖ ຂ່າວ-ພາບ: ຄຳສອນ ສະວິສຸກ*

*ເງິນກີບຄືກຽດສັກສີຂອງຄົນລາວ*